ເອເຟໂຊ 2:2 ເມື່ອກ່ອນພວກທ່ານເຄີຍດຳເນີນຢູ່ໃນການບາບນັ້ນຕາມວິທີຂອງໂລກ ຕາມ ເຈົ້ານາຍແຫ່ງຍ່ານອາກາດ ຄືວິນຍານທີ່ຄອບຄອງຢູ່ໃນຄົນທັງຫລາຍທີ່ບໍ່ເຊື່ອຟັງ

ມັດທາຍ 6:10 ຂໍໃຫ້ພຣະຣາຊອານາຈັກຂອງພຣະອົງມາຕັ້ງຢູ່ ຂໍໃຫ້ເປັນໄປຕາມນ້ຳພຣະທັຍ ຂອງພຣະອົງ ໃນສວັນເປັນຢ່າງໃດກໍ່ໃຫ້ເປັນຢ່າງນັ້ນທີ່ແຜ່ນດິນໂລກ

ລູກາ 22:42 “ພຣະບິດາເອີຍ, ຖ້າພໍພຣະທັຍຂໍໃຫ້ຈອກນີ້ເຄື່ອນຍ້າຍໄປຈາກລູກທ້ອນ ແຕ່ ຢ່າງໃດກໍ່ດີ, ຂໍຢ່າໃຫ້ເປັນໄປຕາມຄວາມປາຖນາຂອງລູກ ແຕ່ໃຫ້ເປັນໄປຕາມພຣະປະສົງ ຂອງພຣະອົງເທີນ”

ໂຍຮັນ 16:7-9 ຢ່າງໃດກໍ່ຕາມ ເຮົາກໍ່ບອກຄວາມຈິງຕໍ່ທ່ານທັງຫລາຍວ່າ ການທີ່ເຮົາຈາກໄປ ນັ້ນເປັນປໂຍດແກ່ພວກທ່ານ ເພາະຖ້າເຮົາບໍ່ໄປ ອົງພຣະຜູ້ຊ່ວຍນັ້ນຈະບໍ່ໄດ້ສະເດັດມາຫາ ພວກທ່ານ ແຕ່ຖ້າເຮົາໄປແລ້ວ ເຮົາກໍ່ຈະໃຊ້ພຣະອົງນັ້ນມາຫາພວກທ່ານ 8 ເມື່ອພຣະອົງ ສະເດັດມາແລ້ວ ພຣະອົງນັ້ນແຫລະ, ຈະຊົງບັນດົນໃຫ້ໂລກຮູ້ແຈ້ງໃນເຣື່ອງຄວາມຜິດ ບາບ ຄວາມຊອບທັມ ແລະການພິພາກສາ 9 ໃນເຣື່ອງຄວາມຜິດບາບນັ້ນ ຄືເພາະເຂົາບໍ່ ວາງໃຈເຊື່ອໃນເຮົາ

2 ຕິໂມທຽວ 2:10 ດ້ວຍເຫດນັ້ນເຮົາຈຶ່ງຍອມທົນເອົາທຸກຢ່າງ ເພາະເຫັນແກ່ພວກທີ່ຊົງ ເລືອກໄວ້ນັ້ນ ເພື່ອເຂົາຈະໄດ້ຮັບຄວາມພົ້ນ ຊຶ່ງມີຢູ່ໃນພຣະເຍຊູຄຣິດ ພ້ອມທັງສະງ່າຣາສີ ອັນຕລອດໄປເປັນນິດ

ໂຣມ 15:20,21 ສັນນັ້ນເຮົາຈຶ່ງຕັ້ງເປົ້າຫມາຍໄວ້ຢ່າງນີ້ວ່າ ຈະປະກາດຂ່າວປະເສີດໃນບ່ອນທີ່ ຍັງບໍ່ມີຜູ້ໃດເຄີຍໄດ້ອອກພຣະນາມຂອງພຣະຄຣິດ ເພື່ອເຮົາຈະບໍ່ໄດ້ກໍ່ຂຶ້ນເທິງຮາກຖານທີ່ ຄົນອື່ນໄດ້ວາງໄວ້ກ່ອນແລ້ວ 21 ຕາມທີ່ມີຄຳຂຽນໄວ້ໃນພຣະຄັມພີວ່າ, “ຄົນທີ່ບໍ່ເຄີຍໄດ້ຮັບ ຄຳບອກເຖິງເຣື່ອງພຣະອົງກໍ່ຈະໄດ້ເຫັນ ແລະຄົນທີ່ບໍ່ເຄີຍໄດ້ຟັງກໍ່ຈະໄດ້ເຂົ້າໃຈ”ໂປໂລຕັ້ງ ໃຈຈະໄປກຸງໂຣມ

ກິຈການ 2:36,37 ເຫດສັນນັ້ນໃຫ້ຍາດວົງອິສຣາເອນຮູ້ຄັກແນ່ວ່າ ພຣະເຈົ້າໄດ້ຊົງຍົກພຣະເຍ ຊູນີ້ ຊຶ່ງທ່ານທັງຫລາຍໄດ້ຕອກຕິດໄວ້ທີ່ໄມ້ກາງແຂນນັ້ນ ຊົງແຕ່ງຕັ້ງໃຫ້ເປັນທັງອົງພຣະ

ຜູ້ເປັນເຈົ້າແລະເປັນພຣະຄຣິດ 37 ເມື່ອຄົນທັງຫລາຍໄດ້ຍິນດັ່ງນັ້ນແລ້ວກໍຮູ້ສຶກເຈັບຊ້ຳ
ກິນແຫນງໃຈ ຈຶ່ງກ່າວແກ່ເປໂຕແລະອັຄສາວົກວ່າ, “ພີ່ນ້ອງເອີຍ, ພວກເຮົາຈະເຮັດຢ່າງ
ໃດ?”

ເຮັບເຣີ 4:2 ເພາະວ່າພວກເຮົາໄດ້ຍິນຂ່າວປະເສີດຢ່າງດຽວກັນກັບເຂົາ ແຕ່ວ່າເຂົາບໍ່ໄດ້ຮັບປ
ໂຍດຈາກຂ່າວປະເສີດນັ້ນ ເພາະເຂົາບໍ່ໄດ້ຮັບດ້ວຍຄວາມເຊື່ອ

ເຢເຣມີ 24:7 ເຮົາກໍໄດ້ສະແດງຄວາມເມດຕາແລະປາກົດໃຫ້ເຂົາເຫັນ ຊາວອິສຣາເອນເອີຍ
ເຮົາໄດ້ຮັກແພງພວກເຈົ້າສເມີມາ ດັ່ງນັ້ນເຮົາຈຶ່ງຈະຮັກແພງພວກເຈົ້າຢ່າງຫມັ້ນຄົງສືບຕໍ່
ໄປ

ກິຈການ 16:14 ແລະມີຍິງຄົນນຶ່ງຊື່ ລີເດັງມາຈາກເມືອງທົວເຕຣາ ເປັນຄົນຂາຍຜ້າສີມ່ວງ
ອ່ອນ ນາງມີໃຈຍຳເກງພຣະເຈົ້າ ເມື່ອນາງຟັງເຮົາຢູ່ພຣະເຈົ້າໄດ້ຊົງໄຂຈິດໃຈຂອງນາງ ໃຫ້
ເອົາໃຈໃສ່ໃນຖ້ອຍຄຳທີ່ໂປໂລກຳລັງກ່າວນັ້ນ

ມັດທາຍ 13:14,15 ຄຳທຳນວາຍຂອງເອຊາຢາກໍຖືກຕ້ອງກັບເຂົາ ຄືຄຳທີ່ວ່າ, “ເຈົ້າທັງຫລາຍ
ຈະໄດ້ຍິນແທ້ ແຕ່ຈະບໍ່ເຂົ້າໃຈຈັກເທື່ອ ຈະໄດ້ເຫັນແທ້ ແຕ່ຈະບໍ່ໄດ້ສັງເກດຈັກເທື່ອ 15
ດ້ວຍວ່າໃຈຂອງຜົວເມືອງນີ້ກໍປຶກຫນາ, ຫູກໍຫນັກ, ຕາຂອງເຂົາກໍຫລັບເສັ້ງ ຢ້ານວ່າເຂົາ
ຈະສັງເກດດ້ວຍຕາ ແລະຈະໄດ້ຍິນດ້ວຍຫູ ແລະຈະຮູ້ດ້ວຍໃຈ ແລ້ວຈະຕ່າວກັບມາ ແລະ
ເຮົາຈະເຮັດໃຫ້ເຂົາດີ”

ເອຊາຢາ 6:9,10 ດ້ວຍເຫດນີ້ ພຣະອົງຊົງສັ່ງຂ້າພະເຈົ້າໄປບອກປະຊາຊົນວ່າ, “ໍ່ເຖິງພວກ
ເຈົ້າຈະຟັງຫລາຍປານໃດ ພວກເຈົ້າກໍຈະບໍ່ເຂົ້າໃຈ ຈະເບິ່ງຄັກປານໃດ ກໍຈະບໍ່ຮູ້ວ່າແມ່ນ
ຫຍັງຈະເກີດຂຶ້ນ” 10 ແລ້ວພຣະອົງຊົງບອກຂ້າພະເຈົ້າວ່າ, “ຈົ່ງທຳໃຫ້ຈິດໃຈຂອງຊົນຊາດ
ນີ້ເປັນມືດມົນ ຫູຫນວກ ຕາບອດ ເພື່ອບໍ່ໃຫ້ພວກເຂົາເຫັນຮຸ່ງ ຫລືໄດ້ຍິນ ແລະເຂົ້າໃຈໄດ້
ແລ້ວພວກເຂົາຈະບໍ່ກັບຄືນມາຫາເຮົາ ແລະຖືກຮັກສາໃຫ້ດີ

ມາຣະໂກ 4:11,12 ພຣະອົງຈຶ່ງຊົງກ່າວແກ່ເຂົາວ່າ, “ຂໍ້ຄວາມລັບເລິກເຣື່ອງຣາຊອານາຈັກ
ຂອງພຣະເຈົ້າ ຊົງໂຜດໃຫ້ທ່ານທັງຫລາຍຮູ້ໄດ້ ແຕ່ຝ່າຍຄົນນອກນັ້ນ ບັນດາຂໍ້ຄວາມ
ເຫລົ່ານີ້ຈະແຈ້ງໃຫ້ຮູ້ດ້ວຍຄຳອຸປມາທັງຫມົດ 12 ເພື່ອ “ເຂົາເບິ່ງແລ້ວເບິ່ງອີກ ແຕ່ຈະບໍ່
ໄດ້ເຫັນແລະຟັງແລ້ວຟັງອີກ ແຕ່ບໍ່ເຂົ້າໃຈ ຢ້ານວ່າເຂົາຈະຫັນກັບມາຫາພຣະເຈົ້າ ແລະຈະ
ຮັບການຊົງອະພັຍ”

ໂຍຮັນ 12:39,40 ສັນນັ້ນເຂົາຈຶ່ງເຊື່ອບໍ່ໄດ້ ເພາະເອຊາຢາໄດ້ກ່າວໄວ້ອີກວ່າ, 40 “ພຣະອົງໄດ້ ຊົງເຮັດໃຫ້ຕາຂອງເຂົາບອດໄປ ແລະໃຫ້ຈິດໃຈຂອງເຂົາແຂງກະດ້າງ ຢ້ານວ່າເຂົາຈະເຫັນ ດ້ວຍຕາແລະສັງເກດຮູ້ດ້ວຍໃຈ ແລ້ວຈະກັບໃຈໃຫມ່ແລ້ວເຮົາຈະໂຜດໃຫ້ເຂົາດີ”

ໂຣມ 11:7,8 ຖ້າດັ່ງນັ້ນແລ້ວຈະເປັນຢ່າງໃດ ພວກອິສຣາເອນບໍ່ໄດ້ພົບສິ່ງທີ່ເຂົາຊອກຫານັ້ນ ແຕ່ຜູ້ທີ່ພຣະເຈົ້າຊົງເລືອກໄວ້ນັ້ນເປັນຜູ້ໄດ້ພົບ ແລະນອກນັ້ນກໍແມ່ນຄົນທີ່ຊົງໃຫ້ເກີດໃຈ ແຂງກະດ້າງໄປ 8 ຕາມທີ່ມີຄຳຂຽນໄວ້ໃນພຣະຄັມພີວ່າ, “ພຣະເຈົ້າໄດ້ຊົງປະທານໃຈທີ່ ເຫງົາຫລັບ ປະທານຕາທີ່ເບິ່ງບໍ່ເຫັນ ແລະຫູທີ່ຟັງບໍ່ໄດ້ຍິນໃຫ້ແກ່ເຂົາຈົນເຖິງທຸກວັນນີ້”

2 ເທຊະໂລນິກ 2:10,11 ແລະກົນອຸບາຍອັນຊົ່ວຮ້າຍທຸກຢ່າງສຳລັບຄົນພວກນັ້ນທີ່ກຳລັງຈິບ ຫາຍໄປ ເພາະເຂົາບໍ່ໄດ້ຍອມຮັກຄວາມຈິງທີ່ຈະໃຫ້ເຂົາພົ້ນໄດ້ 11 ດ້ວຍເຫດນີ້ແຫລະ ພຣະ ເຈົ້າຈຶ່ງຊົງໃຫ້ອິດທິພົນອັນຫລອກລວງນັ້ນເຮັດການຢູ່ພາຍໃນ ເພື່ອໃຫ້ເຂົາເຊື່ອຟັງຄວາມບໍ່ ຈິງ

ມັດທາຍ 13:18-23 “ເຫດສັນນັ້ນທ່ານທັງຫລາຍ ຈົ່ງຟັງຄຳອຸປມາເຣື່ອງຜູ້ຫວ່ານພືດນັ້ນ 19 ເມື່ອຜູ້ໃດໄດ້ຍິນພຣະທັມເຣື່ອງຣາຊອານາຈັກນັ້ນ ແຕ່ບໍ່ເຂົ້າໃຈ ມານຮ້າຍມາຍາດເອົາ ເມັດທີ່ຫວ່ານໃນໃຈຄົນນັ້ນໄປເສັຍ ນັ້ນແຫລະ, ໄດ້ແກ່ເມັດທີ່ຫວ່ານລົງຕາມທາງ 20 ແລະ ເມັດທີ່ຫວ່ານຕົກໃນບ່ອນມີຫີນຫລາຍນັ້ນ ໄດ້ແກ່ບຸກຄົນທີ່ໄດ້ຍິນພຣະທັມ ແລ້ວກໍຮັບ ເອົາທັນທີດ້ວຍຄວາມຍິນດີ 21 ແຕ່ບໍ່ມີຮາກໃນຕົວເອງຈຶ່ງທົນຢູ່ຊົ່ວຄາວ ແລະເມື່ອເກີ ດຄວາມຍາກລຳບາກ ຫລືການຂົ່ມເຫັງເພາະພຣະທັມນັ້ນ ຕົນກໍທໍ້ຖອຍໃຈເສັຍທັນທີ 22 ແລະເມັດທີ່ຫວ່ານຕົກກາງພຸ່ມຫນາມ ໄດ້ແກ່ບຸກຄົນທີ່ໄດ້ຍິນພຣະທັມ ແລ້ວຄວາມກັງ ວົນຕາມທຳມະດາໂລກ ແລະຄວາມຫລອກຫລວງແຫ່ງຊັບສົມບັດ ກໍຫຸ້ມຮັດພຣະທັມນັ້ນ ເສັຍຈຶ່ງບໍ່ເກີດຜົນ 23 ສ່ວນເມັດທີ່ຫວ່ານຕົກລົງໃນດິນດີນັ້ນ ໄດ້ແກ່ຜູ້ທີ່ໄດ້ຍິນພຣະທັມ ແລະເຂົ້າໃຈ ຜູ້ນັ້ນກໍເກີດຜົນໄດ້ຮ້ອຍຕໍ່ແດ່,ຫົກສິບຕໍ່ແດ່, ແລະສາມສິບຕໍ່ແດ່”

2 ໂກຣິນໂທ 3:15,16 ແຕ່ວ່າຕລອດມາເຖິງທຸກວັນນີ້ ເມື່ອໃດເຂົາອ່ານພຣະທັມໂມເຊກໍມີຜ້າ ປົກປິດໃຈຂອງເຂົາຢູ່ 16 “ແຕ່ວ່າເມື່ອໃດທ່ານຫລົບເຂົ້າໄປເຝົ້າອົງພຣະຜູ້ເປັນເຈົ້າ ຜ້າປົກ ນັ້ນຈຶ່ງຍົກອອກເສັຍ”

ເອຊາຢາ 30:28 ພຣະອົງທຳໃຫ້ລົມພັດຢູ່ເບື້ອງຫນ້າຂອງພຣະອົງເຫມືອນລຳທານຖ້ວມທົ້ນ ທີ່ຖ້ວມເຖິງຄໍ ເພື່ອຈະຮ່ອນບັນດາປະຊາຊາດໄປສູ່ຄວາມຈິບຫາຍ ແລະຈະມີບັງຫງນຊຶ່ງ

ພາໃຫ້ເຈົ້ນທີ່ຂາມິດຕັດຂອງຊົນຊາດທັງຫລາຍ

ໂຮເຊອາ 11:3-7 ເຮົານີ້ແຫລະ, ທີ່ສອນເອຟຣາອິມໃຫ້ຍ່າງ ແລະອຸ້ມພວກເຂົາ ແຕ່ພວກເຂົາ ບໍ່ຍອມຮັບຮູ້ວ່າເຮົາເປັນຜູ້ລ້ຽງດູເຂົາ 4 ເຮົາໄດ້ໃຊ້ຄວາມອ່ອນຫວານແລະຄວາມຮັກເປັນ ເຄື່ອງຊັກຈູງໃຫ້ເຂົາມາຫາເຮົາ ໄດ້ໂຊມເຂົາລຸກຂຶ້ນແລ້ວກອດແນບໃສ່ແກ້ມ ແລະໄດ້ຖ່ອມ ຕົວລົງມາລ້ຽງດູເຂົາ 5 ພວກເຂົາຈະບໍ່ກັບຄືນໄປຍັງປະເທດເອຢິບອີກ ແຕ່ວ່າກະສັດອັສຊີ ເຣັງຈະບົກຄອງເຂົາ ເພາະວ່າເຂົາປະຕິເສດບໍ່ຍອມຄືນໄປຫາເຮົາ 6 ສົງຄາມຈະທຳລາຍຫົວ ເມືອງແລະໄລປະຕູເມືອງຖິ້ມ ມັນຈະລ້າງຜານໄພ່ພົນຂອງເຮົາດ້ວຍ ເພາະວ່າພວກເຂົາໄດ້ ເຮັດຕາມແນວທາງຊົ່ວ 7 ພວກເຂົາໄດ້ຫນີຈາກເຮົາໄປ ເຫດສັນນັ້ນ ພວກເຂົາຈຶ່ງຫນີ ຈາກຜົນຂອງການກະທຳນັ້ນບໍ່ໄດ້ ເຂົາຈະຮ້ອງໄຫ້ຍ້ອນແອກໃນຄໍ ແລະຈະບໍ່ມີໃຜເອົາມັນ ອອກໃຫ້ເຂົາ

ກິຈການ 26:18 ເພື່ອຈະໃຫ້ເຈົ້າໄຂຕາເຂົາ ເພື່ອເຂົາຈະກັບຈາກຄວາມມືດມົນຄາວຖືງຄວາມ ສວ່າງ ແລະຈາກອຳນາດຂອງຊາຕານມາເຖືງພຣະເຈົ້າ

2 ຕິໂມທຽວ 2:24-26 ຝ່າຍຜູ້ຮັບໃຊ້ຂອງອົງພຣະຜູ້ເປັນເຈົ້າບໍ່ຕ້ອງວິວາດຜິດຖຽງກັນແຕ່ ຕ້ອງມີໃຈເມດຕາຕໍ່ຄົນທັງປວງ ເປັນຄຣູທີ່ເຫມາະສົມ ແລະມີໃຈພາກພຽນອົດທົນ 25 ຊີ້ ແຈງໃຫ້ຄົນທີ່ຂັດຂວາງຕໍ່ສູ້ນັ້ນດ້ວຍໃຈອ່ອນສຸພາບ ວ່າພຣະເຈົ້າອາດຊົງໂຜດໃຫ້ເຂົາຖິ້ມ ໃຈເກົ່າເອົາໃຈໃຫມ່ ແລະມາເຖືງການສັງເກດຮູ້ຄວາມຈົງ 26 ແລະໃຫ້ເຂົາຮູ້ສຶກຕື່ນຕົວຈຶ່ງ ຫລຸດພົ້ນຈາກບ້ວງແຮ້ວຂອງມານ ຜູ້ຊຶ່ງຈັບເຂົາໄວ້ໃຫ້ເຮັດຕາມຄວາມປະສົງຂອງມັນ

ພຣະນິມິດ 3:17-19 ເພາະເຈົ້າເວົ້າວ່າ, “ຂ້ອຍຮັ່ງມີແລ້ວ ໄດ້ຊັບສົ່ງຂອງທະວີຂຶ້ນ ຂ້ອຍບໍ່ຕ້ອງ ການສິ່ງໃດ” ເຈົ້າບໍ່ຮູ້ວ່າເຈົ້າເປັນຄົນທຸກໄຮ້ເຂັນໃຈ ເປັນຄົນຫນ້າສົງສານ ເປັນຄົນຂັດສົນ ເປັນຄົນຕາບອດ ແລະເປືອຍກາຍຢູ່ 18 ເຫດນັ້ນເຮົາເຕືອນສະຕິເຈົ້າໃຫ້ຊື້ຄຳທີ່ຫລອມໃຫ້ ບໍຣິສຸດແລ້ວຈາກເຮົາ ເພື່ອເຈົ້າຈະໄດ້ເປັນຄົນຮັ່ງມີ ແລະໃຫ້ເຈົ້າຊື້ເສື້ອຜ້າຂາວນຸ່ງຫົ່ມຕົວ ເພື່ອປົກບັງຄວາມລະອາຍຂອງການເປືອຍກາຍຂອງເຈົ້າບໍ່ໃຫ້ປາກົດ ແລະຊື້ຢາໃສ່ຕາ ຂອງເຈົ້າເພື່ອເຈົ້າຈະໄດ້ເຫັນຮຸ່ງ 19 ຝ່າຍເຮົາ ເຮົາຮັກຜູ້ໃດເຮົາກໍ່ຕິຕຽນຂ້ຽນສອນຜູ້ນັ້ນ ເຫດສັນນັ້ນ ຈົ່ງມີໃຈຮ້ອນຮົນແລະຕັ້ງໃຈເສັ້ງໃຫມ່

2 ໂກຣິນໂທ 7:10 ດ້ວຍວ່າຄວາມທຸກໃຈຕາມຢ່າງຊອບພຣະທັຍພຣະເຈົ້ານັ້ນ ຍ່ອມເຮັດໃຫ້ ກັບໃຈເສັ້ງໃຫມ່ ຊຶ່ງນຳໄປສູ່ຄວາມພົ້ນໂດຍບໍ່ຄວນກົນແຫນງ ແຕ່ຄວາມທຸກໃຈຕາມຢ່າງ

ໂລກນັ້ນ ຍ່ອມນຳໄປເຖິງຄວາມຕາຍ

1 ກະສັດ 18:37 ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງຕອບຂ້າພຣະອົງດ້ວຍ ເພື່ອປະຊາຊົນເຫລົ່ານີ້ຈະຮູ້ວ່າພຣະອົງຊົງເປັນພຣະເຈົ້າອົງທ່ຽງແທ້ ຜູ້ຊົງປ່ຽນແປງຈິດໃຈເຂົາໃຫ້ກັບຄືນມາ

2 ໂກຣິນໂທ 4:4 ສ່ວນຄົນເຫລົ່ານັ້ນທີ່ບໍ່ເຊື່ອ ພຣະຂອງສະໄຫມນີ້ໄດ້ເຮັດໃຫ້ໃຈຂອງເຂົາມືດໄປ ເພື່ອບໍ່ໃຫ້ເຂົາໄດ້ເຫັນແສງສວ່າງຂອງຂ່າວປະເສີດເຣື່ອງພຣະສະງ່າຣາສີຂອງພຣະຄຣິດ ຜູ້ຊົງມີລັກສະນະຢ່າງພຣະເຈົ້າ

ລູກາ 8:11-15 “ຄຳອຸປມານັ້ນກໍເປັນດັ່ງນີ້ ຄືເມັດພືດນັ້ນໄດ້ແກ່ພຣະທັມຂອງພຣະເຈົ້າ 12 ເມັດທີ່ຕົກກາງທາງໄດ້ແກ່ພວກຄົນທີ່ໄດ້ຍິນ ແລ້ວພຍາມານມາຍາດເອົາພຣະທັມໄປຈາກໃຈຂອງເຂົາ ເພື່ອບໍ່ໃຫ້ເຊື່ອແລະພົ້ນໄດ້ 13 ເມັດທີ່ຕົກບ່ອນມີຫີນໄດ້ແກ່ຜູ້ທີ່ໄດ້ຍິນ ແລ້ວກໍຮັບພຣະທັມນັ້ນດ້ວຍຄວາມຍິນດີແຕ່ບໍ່ມີຮາກ ເຊື່ອຢູ່ແຕ່ຊົ່ວຄາວ ເມື່ອຖືກທົດລອງເຂົາເລີກເສັຍ 14 ເມັດທີ່ຕົກກາງພຸ່ມຫນາມນັ້ນໄດ້ແກ່ພວກຄົນທີ່ໄດ້ຍິນ ແລ້ວອອກໄປຕາມທາງ ແລະຄວາມກັງວົນ ກັບຊັບສົມບັດ ທັງຄວາມສນຸກຂອງຊີວິດນີ້ໄດ້ເຂົ້າມາຫຸ້ມຮັດພຣະທັມນັ້ນເສັຍ ແລ້ວຜົນຂອງເຂົາຈຶ່ງບໍ່ທັນສຸກ 15 ເມັດທີ່ຕົກໃສ່ດິນດີນັ້ນໄດ້ແກ່ຜູ້ທີ່ໄດ້ຍິນພຣະທັມດ້ວຍໃຈເຫລື້ອມໃສ ສັດທາ ແລ້ວກໍຈົດຈຳໄວ້ ຈຶ່ງເກີດຜົນໂດຍຄວາມພຽນ”

ກິຈການ 15:11 ແຕ່ພວກເຮົາເຊື່ອວ່າເຮົາຈະໄດ້ພົ້ນໂດຍພຣະຄຸນຂອງພຣະອົງເຈົ້າເຢຊູ ເຫມືອນຢ່າງເຂົາ

ໂຣມ 8:13 ເພາະຖ້າເຈົ້າທັງຫລາຍດຳເນີນຊີວິດຕາມຝ່າຍເນື້ອກາຍ ພວກເຈົ້າຄົງຈະຕາຍ ແຕ່ຖ້າໂດຍຣິດພຣະວິນຍານພວກເຈົ້າໄດ້ທຳລາຍການຂອງຝ່າຍເນື້ອກາຍເສັຍ ເຈົ້າຄົງຈະມີຊີວິດຢູ່

Pastor T. John Franklin
Church of Salvation, Healing, and Deliverance
COS-HAD.org